*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 1, 12-17
https://doi.org/10.69692/SUJMRD090112

# Using Library activities to develop teaching-learning French at Faculty of Education at the Francophone Center, National University of Lao

**Olady THAMMASALO[1], Laongdao BOUNCHALEUNH, Sènglamphan DYVANHNA, Thanwaphone DORBOUNGNOU, Olivia DEROBERT**
*Department of Foreign Languages, Faculty of Education, National University of Lao, Lao PDR*

Correspondence: Olady THAMMASALO, *Department of Foreign Languages, Faculty of Education, National University of Lao, Tel: +856 20 2826 7770, E-mail: oladynuny@gmail.com*

***Article Info:***
*Submitted: Jun 30, 2022*
*Revised: Sep 21, 2022*
*Accepted: Oct 06, 2022*

**Abstract**

This research report combines two objectives 1). to study additional activities outside the classroom to improve the learning of French in the first year of the French license at the Department of Foreign Languages, Faculty of Education National University of Lao, and 2). to study the satisfaction of the students with the activities. In addition, these activities are intended to allow students to usefully occupy their free time and to promote the practice of language skills and group work. The target group of the research is students from 1st to 3rd year, with a total of 40 people, 28 women. They have an intermediate level of French and they all need to participate in the activity. The research tool was a questionnaire based on the 5-level Likert rating scale. The statistics used to describe the search results are frequency, percentage, and average. The activities in which most students participate with interest are “talking with French people” and “searching for documents,” so the research group can say that both activities are very interesting (F = 97.5% and F = 100%). The research group can therefore say that both activities are very interesting (F = 97.5% and F = 100%). In addition, the research group found that the level of satisfaction is very high in terms of reading French books (58%), in terms of watching films French 67%, in terms of conversation with French speakers (52.5%), in terms of listening to French music 50%, in terms of computer learning (50%) and in terms of finding passages (50%). Furthermore, students develop and strengthen their knowledge of France. Students can also practice communication and have the courage to express themselves in French. Therefore, teachers must also teach French culture because it is very necessary that students know well. Thus, the research group can conclude that these activities outside the classroom contribute to stimulating students' desire to learn French. The various activities were achievement for the goal setting due to the activities management was increased students’ interest in learning French while teachers’ teaching.

**Key words**: *French learning, library activities, students, Satisfaction, improved learning*

## 1. ພາກສະເໜີ

ພາສາຝຣັ່ງເປັນພາສາໃຊ້ຫຼາຍທີ່ສຸດເປັນອັນດັບທີຫ້າໃນໂລກ. ດັ່ງນັ້ນຈຶ່ງມີຜູ້ເວົ້າຫຼາຍຄົນ ທີ່ໃຊ້ພາສາຝຣັ່ງ ໃນການສື່ສານ. (Tradutec, 2016) ພາສາຝຣັ່ງມີຄວາມສໍາຄັນຫຼາຍເພາະວ່າມັນເປັນພາສາຫນຶ່ງຂອງຂົງເຂດເສດຖະກິດລະຫວ່າງປະເທດ, ປະເທດທີ່ເວົ້າພາສາຝຣັ່ງ, ເຊິ່ງກວມເອົາປະມານ15% ຂອງປະເທດໃນໂລກ,ໂດຍສະເພາະໃນອາ ຊີຕາເວັນອອກສຽງໃຕ້, ປະຊາກອນທີ່ເວົ້າພາສາຝຣັ່ງ ແລະຫ້ອງຮຽນສອງພາສາໄດ້ຖືກສ້າງຂຶ້ນໃນ ປະເທດຫວຽດນາມ, ກໍາປູເຈຍ, ໄທ ແລະ ລາວ (Vientiane, 2014).

ການຮຽນຮູ້ເປັນຂະບວນການ ທີ່ຊ່ວຍໃຫ້ຜູ້ຮຽນສ້າງຄວາມຮູ້ເພື່ອໃຫ້ສາມາດຄິດແລະປະຕິບັດ. ມັນເປັນຂະບວນການທີ່ເຮັດໃຫ້ຜູ້ຮຽນສ້າງຄວາມຮູ້ພາຍໃນຕົນເອງເພື່ອຄິດແລະປະຕິບັດໄດ້ທັງພາຍໃນແລະນອກຫ້ອງຮຽນ (Beillerot, 1989). ການຮຽນຮູ້ແມ່ນການປ່ຽນແປງພຶດຕິກໍາ ອັນເນື່ອງມາຈາກປະສົບການທີ່ຄົນເຮົາມີປະຕິສາພັນກັບສິ່ງແວດລ້ອມ ຫຼື ຈາກການເຝິກຫັດ ລວມທັງການປ່ຽນປະ ລິມານຄວາມຮູ້ຂອງຜູ້ຮຽນ ໂດຍໜ້າທີ່ສາຄັນຂອງຜູ້ສອນຄືຊ່ວຍຜູ້ຮຽນແຕ່ລະຄົນໃຫ້ເກີດການຮຽນຮູ້ ຫຼື ມີຄວາມຮູ້ ແລະ ທັກສະຕາມທີ່ຫຼັກສູດໄດ້ວາງໄວ້ ດັ່ງນັ້ນຂະບວນການຮຽນຮູ້ຈຶ່ງເປັນຮາກຖານຂອງການສອນທີ່ມີປະສິດທິພາບ (ສຸຮາງໂຄ້ວຕະກູນ, 2552,ໜ້າ. 185).

ການຮຽນພາສາຕ່າງປະເທດກໍເຊັ່ນກັນ, ຜູ້ສອນສາມາດຈັດກິດຈະກໍາເພື່ອສ້າງໃຫ້ຜູ້ຮຽນມີຂະບວນການຄິດດ້ວຍຕົນເອງ ແລະ ປະຕິບັດໄດ້. ເພື່ອພັດທະນາຄວາມຮູ້ດ້ານພາສາຝຣັ່ງຂອງນັກສຶກສາ,ນັກວິຊາການການສອນໄດ້ສະເໜີກິດຈະກໍາຫຼາກຫຼາຍຮູບແບບໃຫ້ພິຈາລະນາ. ກິດຈະກໍາທີ່ຊ່ວຍເສີມທັກສະດ້ານການສື່ສານແມ່ນກິດຈະກໍາທີ່ໂດດເດັ່ນດ້ວຍຄວາມຄິດສ້າງສັນແລະມີສ່ວນສໍາຄັນເຊິ່ງທ່ານນາງ (Bérard, 1991) ໄດ້ຈັດກິດຈະກໍາອອກເປັນ 3 ປະເພດຄື: ກິດຈະກໍາເພື່ອຄວາມເຂົ້າໃຈ, ກິດຈະກໍາການຄົ້ນຄິດແລະກິດຈະກໍາການສະແດງອອກ. ດັ່ງນັ້ນ, ການສື່ສານກັບເຈົ້າຂອງພາສາແລະກິດຈະກໍາໂດຍອີງໃສ່ການນໍາໃຊ້ພາສາເປົ້າຫມາຍແມ່ນປົກກະຕິແລ້ວເຫັນວ່າເປັນວິທີທີ່ດີທີ່ຈະປະຕິບັດທັກສະທີ່ໄດ້ຮັບ, ຮັບຮູ້ເຖິງຜົນປະໂຫຍດຂອງເຂົາເຈົ້າແລະເສີມສ້າງແຮງຈູງໃຈຂອງນັກສຶກສາ (BLONDIN, 2014).

ຈາກການສັງເກດຂອງຄູອາຈານທີ່ຈັດການຮຽນ-ການສອນພາສາຝຣັ່ງຢູ່ ພາກວິຊາຄູພາສາຝຣັ່ງ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ (UNL), ສະພາບການຮຽນແມ່ນມີຄວາມຫຍຸ້ງຍາກບາງຄັ້ງເນື່ອງຈາກວ່ານັກສຶກສາຂາດຄວາມກະຕືລືລົ້ນໃນຊົ່ວໂມງຮຽນ. ນອກຈາກນັ້ນ, ນັກສຶກສາປີທີ1ແລະ2ຫຼາຍຄົນທີ່ມາຈາກໂຮງຮຽນຊົນນະບົດ, ການຮຽນພາສາຝຣັ່ງຂອງນັກສຶກສາສແມ່ນຍັງຢູ່ໃນລະດັບອ່ອນ, ຍັງມີຄວາມຮູ້ໜ້ອຍ,ບໍ່ເຂົ້າໃຈກ່ຽວກັບພາສາ ແລະ ວັດທະນະທໍາຝຣັ່ງ. ສະນັ້ນ, ການຈັດກິດຈະກໍານອກຫ້ອງຮຽນ ເພື່ອຊ່ວຍໃຫ້ນັກສຶກສາພັດທະນາການຮຽນພາສາຝຣັ່ງ, ທົບທວນຄໍາສັບແລະສາມາດນໍາໃຊ້ຄວາມຮູ້ທີ່ໄດ້ຮັບໃນພາສາຝຣັ່ງໃນຫ້ອງຮຽນເພື່ອເອົາໄປໃຊ້ໃນຊີວິດປະຈໍາວັນ. ນອກຈາກນັ້ນ, ນັກສຶກສາທີ່ຮ່ວມກິດຈະ ກໍາຍັງສາມາດພັດທະນາທັກສະທາງດ້ານພາສາຄື:ການຟັງ, ການເວົ້າ, ການອ່ານ ແລະ ການຂຽນເປັນພາສາຝຣັ່ງ ເພື່ອຮຽນຮູ້ກ່ຽວກັບວັດທະນະທໍາຂອງປະເທດຝຣັ່ງ. ກິດຈະກໍາທີ່ຖືກເລືອກນັ້ນ ຕ້ອງແຕກຕ່າງກັນໃນແຕ່ລະຄັ້ງຄື: ສົນທະ ນາກັບຄົນຝຣັ່ງ, ຄົ້ນຫາເອກະສານ , ການເບິ່ງຮູບເງົາ, ການຟັງເພງ, ການອ່ານປຶ້ມ, ການເຮັດວຽກຜ່ານຄອມພິວເຕີ ເຊິ່ງຈະຊ່ວຍໃຫ້ນັກສຶກສາສາມາດປັບປຸງຄວາມຮູ້ພາສາຝຣັ່ງ. ນັກສຶກສາຫຼາຍຄົນທີ່ມີຄວາມຫຍຸ້ງຍາກໃນການສື່ສານເປັນພາສາຝຣັ່ງນອກຫ້ອງຮຽນ. ດັ່ງນັ້ນ, ຈຶ່ງຄົ້ນພົບເຫັນບັນຫາຫຼາຍຢ່າງໃນການຝຶກຝົນຮໍ່າຮຽນພາສາຝຣັ່ງ. ເຊິ່ງຫົວຂໍ້ການຄົ້ນຄວ້າແມ່ນ: "ການຈັດກິດຈະກໍາເພື່ອປັບປຸງການຮຽນພາສາຝຣັ່ງ ສາລັບນັກສຶກສາຄູພາສາຝຣັ່ງ ຄະນະສຶກສາສາດທີ່ສູນພາສາຝຣັ່ງໂກໂຟນ Pôle francophone, ມະຫາ ວິທະຍາໄລແຫ່ງຊາດ". ຫົວຂໍ້ນີ້ມີເພື່ອຊອກຫາເຫດຜົນເປັນຫຍັງນັກສຶກສາຂອງຄະນະສຶກສາສາດຈຶ່ງມີບັນຫາໃນການຮຽນພາສາຝຣັ່ງ. ກິດຈະກໍາທັງຫມົດເຫຼົ່ານີ້ແມ່ນມີຄວາມສໍາຄັນຫຼາຍ ເພາະວ່າ

ນັກສຶກສາສາມາດໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ, ຊ່ວຍຝຶກທັກສະພາສາ ແລະ ການເຮັດວຽກເປັນກຸ່ມ.

ຈຸດປະສົງຂອງການຄົ້ນຄວ້າ 1) ເພື່ອສຶກສາການເຮັດກິດຈະກຳເພີ່ມເຕີມນອກຫ້ອງຮຽນເພື່ອປັບປຸງການຮຽນພາສາຝຣັ່ງສຳລັບນັກສຶກສາຂາຄູພາສາຝຣັ່ງ ຄະນະສຶກສາສາດ ມຊ ແລະ 2) ເພື່ອສຶກສາຄວາມເພິ່ງພໍໃຈຂອງຜູ້ເຂົ້າຮ່ວມກິດຈະກຳການຮຽນພາສາຝຣັ່ງ ທີ່ສູນຝຣັ່ງໂກໂຟນ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍຂອງຄົ້ນຄວ້າ ແມ່ນນັກສຶກສາຄູພາສາຝຣັ່ງ ປີທີ 1, 2, 3 ພາກວິຊາຄູພາສາຕ່າງປະເທດ ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ ຈຳນວນ 3 ຫ້ອງ ເຊິ່ງລວມທັງໝົດມີ 40 ຄົນ ຍິງ 28 ຄົນ ຂອງພາກຮຽນທີ 1 ສົກສຶກສາ 2016 - 2017 ທີ່ເລືອກມາເປັນກຸ່ມທົດລອງ ໂດຍໃຊ້ວິທີເລືອກແບບເຈາະຈົງ.

### 2.2 ເຄື່ອງມືການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນການຄົ້ນຄວ້າໃນຄັ້ງນີ້ ແມ່ນແບບສອບຖາມທີ່ແບ່ງອອກເປັນ 3 ພາກ ເຊິ່ງມີລາຍລະອຽດຄື: ແບບສອບຖາມ : ພາກທີ 1: ເປັນແບບສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມທີ່ມີລັກສະນະເປັນແບບກວດສອບລາຍການ (Check list) ປະກອບດ້ວຍ: ເພດ ແລະ ຊັ້ນຮຽນ. ພາກທີ 2: ເປັນແບບສອບຖາມກ່ຽວການປະເມີນສ່ວນບຸກຄົນ ທີ່ຄູສອນນຳໃຊ້ພາສາລາວເຂົ້າໃນການສິດສອນພາສາຝຣັ່ງ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ທີ່ມີລັກສະນະເປັນແບບກວດສອບລາຍການ (Check list) ແລະ (Rating Scale). ພາກທີ 3: ເປັນແບບສອບຖາມປາຍເປີດກ່ຽວກັບຂໍ້ສະເໜີແນະ ຫຼື ຂໍ້ມູນບາງດ້ານທີ່ອາດຂາດຫາຍໄປໃນແບບສອບຖາມ. ການຄົ້ນຄວ້າໂດຍເນັ້ນການເກັບກາຂໍ້ມູນທາງດ້ານປະລິມານໂດຍນຳໃຊ້ແບບສອບຖາມໂດຍສອບຖາມຂໍ້ມູນທົ່ວໄປ, ຂໍ້ມູນທີ່ວັດຕາມມາດຕາສ່ວນປະເມີນຄ່າ 5 ລະດັບ ແລະ ຂໍ້ສະເໜີແນະຈາກຜູ້ຕອບແບບສອບຖາມ.

ເກນແປຄວາມໝາຍຄ່າສະເລ່ຍຂອງຄະແນນແບ່ງອອກເປັນ 5 ລະດັບ (ຄວາມເພິ່ງພໍໃຈ) ດັ່ງນີ້:

| | |
|---|---|
| 4.51 – 5.00 | ໝາຍເຖິງພໍໃຈຫຼາຍທີ່ສຸດ |
| 3.51 – 4.50 | ໝາຍເຖິງພໍໃຈຫຼາຍ |
| 2.51 – 3.50 | ໝາຍເຖິງພໍໃຈປານກາງ |
| 1.51 – 2.50 | ໝາຍເຖິງພໍໃຈໜ້ອຍ |
| 1.00 – 1.50 | ໝາຍເຖິງ ພໍໃຈໜ້ອຍທີ່ສຸດ |

### 2.3 ວິທີການຄົ້ນຄວ້າ

ສຶກສາກ່ຽວກັບການຈັດກິດຈະກຳ ເພື່ອພັດທະນາການຮຽນພາສາຝຣັ່ງ ສຳລັບນັກສຶກສາຄູພາສາຝຣັ່ງ, ຄະນະສຶກສາສາດ, ທີ່ສູນຝຣັ່ງໂກໂຟນ, ມະຫາວິທະຍາໄລແຫ່ງຊາດ ໂດຍສະເພາະແມ່ນກິດຈະກາການຮຽນພາສາຝຣັ່ງນອກຫ້ອງຮຽນພ້ອມທັງປຽບທຽບຄວາມຄິດເຫັນ ແລະ ຈຳແນກຕາມເພດ. ການຄົ້ນຄວ້ານີ້ແມ່ນໄດ້ເນັ້ນພຽງແຕ່ຂໍ້ມູນທີ່ມາຈາກແນວຄວາມຄິດຂອງນັກສຶກສາເພື່ອເຫັນພາບໂດຍລວມກ່ຽວກັບການຮຽນຮູ້ດ້ວຍຕົນເອງ. ສະນັ້ນ, ທີມຄົ້ນຄວ້າຈຶ່ງເລືອກດຳເນີນການຄົ້ນຄວ້າ ໂດຍເນັ້ນການເກັບກຳຂໍ້ມູນທາງດ້ານປະລິມານ ໂດຍນຳໃຊ້ແບບສອບຖາມໂດຍສອບຖາມຂໍ້ມູນທົ່ວໄປ ແລະ ຂໍ້ສະເໜີແນະຈາກຜູ້ຕອບແບບສອບຖາມ.

### 2.4 ວິທີວິເຄາະຂໍ້ມູນ

ພາຍຫຼັງທີ່ຜູ້ຄົ້ນຄ້ວາເກັບກຳຂໍ້ມູນການສັງເກດ ແລະ ແບບສອບຖາມແລ້ວງກໍ່ໄດ້ນຳເອົາຂໍ້ມູນມາຈັດລຽງ ຫຼື ຄີຂໍ້ມູນເປັນແຕ່ລະພາກສ່ວນ, ເຊິ່ງການວິເຄາະຂໍ້ມູນຄັ້ງນີ້ ຜູ້ຄົ້ນຄ້ວາໄດ້ດຳເນີນນຳມາແປຜົນຄ່າສະເລ່ຍໂດຍນຳໃຊ້ໂປຣແກມທາງຄອມພິວເຕີ້ໃນການຄິດໄລ່ Microsoft Excel ແລະ SPSS Statistics ເພື່ອຊອກຫາອັດຕາສ່ວນ (%).

## 3. ຜົນໄດ້ຮັບ

ຈາກຜົນການວິເຄາະຂໍ້ມູນກ່ຽວກັບກິດຈະກຳເພື່ອປັບປຸງການຮຽນພາສາຝຣັ່ງຂອງນັກສຶກສາຄູພາສາຝຣັ່ງຄະນະສຶກສາສາດທີ່ສູນພາສາຝຣັ່ງໂກໂຟນ Pôle francophone, ມະຫາວິທະຍາໄລແຫ່ງຊາດ ພົບວ່າ ໂດຍລວມນັກສຶກສາສາມາດພັດທະນາການຮຽນພາສາຝຣັ່ງຈາກ

ກິດຈະກຳການອ່ານປຶ້ມ, ການເບິ່ງຮູບເງົາ, ການສົນທະນາກັບເຈົ້າຂອງພາສາ, ການຟັງເພງ, ການເຮັດວຽກຜ່ານຄອມພິວເຕີ ແລະ ການຄົ້ນຄວ້າເອກະສານດ້ວຍຕົນເອງ.

ໃນນີ້ ເຫັນວ່າກິດຈະກຳທີ່ຄົນສ່ວນໃຫຍ່ເຂົ້າຮ່ວມດ້ວຍຄວາມຫຼາຍແມ່ນ "ສົນທະນາກັບຄົນຝຣັ່ງ" ແລະ "ຄົ້ນຫາເອກະສານ" ເພາະເປັນກິດຈະກຳທີ່ສົ່ງເສີມຂະບວນການຄິດ ແລະ ປະຕິບັດຕົວຈິງຂອງນັກສຶກສາ. ເມື່ອພິຈາລະນາແຕ່ລະກິດຈະກຳຈະສາມາດສະຫຼຸບໄດ້ດັ່ງນີ້:

**1) ການອ່ານປຶ້ມຝຣັ່ງ**

ນັກສຶກສາເຂົ້າຮ່ວມກິດຈະກຳການອ່ານປຶ້ມ ເທົ່າກັບ 61% ໄດ້ພັດທະນາທັກສະຫຼາຍຢ່າງເຊັ່ນ: ການເວົ້າ, ການຟັງ ແລະ ການອ່ານ. ນອກຈາກນັ້ນ, ກິດຈະກຳນີ້ເຮັດໃຫ້ສາມາດພັດທະນາການສື່ສານໃນພາສາຝຣັ່ງ, ມີຄວາມກ້າຫານ, ມີຄວາມຫ້າວຫັນ. ນັກສຶກສາສາມາດຝຶກຝົນການສົນທະນາ ໃນເວລາທີ່ສື່ສານເປັນພາສາຝຣັ່ງ. ປະສົບການທີ່ຜູ້ເຂົ້າຮ່ວມໄດ້ຮັບແມ່ນມີຄວາມສຳຄັນຫຼາຍ ແລະ ມີຄວາມຈຳເປັນສຳລັບການຮຽນຮູ້. ນັກສຶກສາໄດ້ສະແດງຄວາມຄິດເຫັນວ່າ ກິດຈະກຳນີ້ຊ່ວຍໃຫ້ໄດ້ຄວາມຮູ້ ເພື່ອປັບປຸງການຮຽນຮູ້, ນຳໃຊ້ຄວາມຈຳ ພ້ອມທັງຮຽນຮູ້ຄຳສັບຕ່າງໆ.

**2) ການເບິ່ງຮູບເງົາຝຣັ່ງ**

ນັກສຶກສາເຂົ້າຮ່ວມກິດຈະກຳການເບິ່ງຮູບເງົາຝຣັ່ງ ເທົ່າກັບ 56% ນັກສຶກສາໄດ້ພັດທະນາທັກສະຫຼາຍຢ່າງເຊັ່ນ: ການເວົ້າ, ການຟັງ ແລະ ການອ່ານ. ນອກຈາກນັ້ນ, ກິດຈະກຳນີ້ຊ່ວຍປັບປຸງການສື່ສານໃນພາສາຝຣັ່ງ, ໂດຍສະເພາະການອອກສຽງ, ການຮຽນຮູ້ຄຳສັບໃຫມ່, ຄວາມກ້າຫານທີ່ຈະສະແດງອອກແລະມີຄວາມຫ້າວຫັນ. ດັ່ງນັ້ນ, ປະສົບການທີ່ນັກສຶກສາເຂົ້າຮ່ວມໄດ້ຮັບແມ່ນມີຄວາມສຳຄັນຫຼາຍ , ມີຄວາມຈຳເປັນແລະເປັນປະໂຫຍດສຳລັບການຮຽນຮູ້. ຍິ່ງໄປກວ່ານັ້ນ, ກິດຈະກຳນີ້ສາມາດກະຕຸ້ນໃຫ້ນັກຮຽນຮຽນພາສາຝຣັ່ງດ້ວຍຄວາມກະຕືລືລົ້ນ.

**3) ການສົນທະນາກັບເຈົ້າຂອງພາສາຝຣັ່ງ**

ນັກສຶກສາເຂົ້າຮ່ວມກິດຈະກຳການສົນທະນາກັບເຈົ້າຂອງພາສາຝຣັ່ງ ເທົ່າກັບ 50% ຜູ້ເຂົ້າຮ່ວມໄດ້ມີການພັດທະນາທັກສະການເວົ້າ ແລະ ການຟັງ. ດັ່ງນັ້ນ, ກິດຈະກຳນີ້ຊ່ວຍປັບປຸງການສື່ສານ, ມີຄວາມກ້າຫານທີ່ຈະສະແດງອອກ ແລະ ຮຽນຮູ້ຄຳສັບໃຫມ່. ສິ່ງເຫຼົ່ານີ້ ແມ່ນຜົນປະໂຫຍດທີ່ນັກສຶກສາໄດ້ຮັບຈາກການຮຽນຮູ້. ພວກເຂົາສາມາດປັບປ່ຽນຄວາມຮູ້ທີ່ໄດ້ມາໃນລະຫວ່າງການຮຽນຢູ່ໃນຫ້ອງຮຽນ.

**4) ການຟັງເພງຝຣັ່ງ**

ນັກສຶກສາເຂົ້າຮ່ວມກິດຈະກຳການຟັງເພງຝຣັ່ງ ເທົ່າກັບ 55% ກິດຈະກຳນີ້ເຮັດໃຫ້ສາມາດຝຶກທັກສະ 2 ທັກສະ ຄື: ການຟັງ ແລະ ການອ່ານ. ປົກກະຕິແລ້ວ, ມີຫຼາຍວິທີທີ່ຈະຊອກຫາຂໍ້ມູນກ່ຽວກັບປະເທດຝຣັ່ງ, ແຕ່ກິດຈະກຳນີ້ແມ່ນງ່າຍທີ່ຈະຈັດແລະດຶງດູດນັກສຶກສາໂດຍການດຶງດູດຄວາມຢາກຮູ້ຂອງນັກສຶກສາໃນຫ້ອງຮຽນ ເນື່ອງຈາກວ່າມີຄຳຖາມທີ່ກະຕຸ້ນໃຫ້ຄົ້ນຄວ້າຫາຄຳຕອບ. ນອກຈາກນັ້ນ, ນັກສຶກສາສາມາດໄດ້ຮັບຄວາມຮູ້ກ່ຽວກັບ ປະເທດຝຣັ່ງ, ພ້ອມທັງຮູ້ຄຳສັບຄຳສັບຕ່າງໆທີ່ກ່ຽວຂ້ອງກັບຝຣັ່ງ. ຍິ່ງໄປກວ່ານັ້ນ, ກິດຈະກຳນີ້ແມ່ນເປັນປະໂຫຍດຫຼາຍສຳລັບຫຼັກສູດອາລະຍະທຳຂອງຝຣັ່ງ. ສຳລັບກິດຈະກຳນີ້, ຜົນປະໂຫຍດທີ່ໄດ້ຮັບຈາກຜູ້ເຂົ້າຮ່ວມແມ່ນສິ່ງໃຫມ່, ຄຳສັບຄຳສັບໃຫມ່, ການເຮັດວຽກເປັນກຸ່ມ ແລະ ເພີ່ມຄວາມຈຳ.

**5) ການຮຽນຜ່ານຄອມພິວເຕີ**

ນັກສຶກສາເຂົ້າຮ່ວມກິດຈະກຳການການຮຽນຜ່ານຄອມພິວເຕີ ເທົ່າກັບ 65% ກິດຈະກຳດັ່ງກ່າວເຮັດໃຫ້ສາມາດສົ່ງເສີມທັກສະທາງດ້ານພາສາ ເຊັ່ນ: ການຂຽນ, ການຟັງ ແລະ ການອ່ານ. ນອກຈາກນັ້ນ, ຍັງພົບວ່ານັກສຶກສາໄດ້ຄົ້ນພົບລັກສະນະໃໝ່ຂອງວັດທະນະທຳຝຣັ່ງ, ຣິດສະນິຍົມ ແລະ ຄວາມຮູ້ສຶກຂອງຮ່າງກາຍທີ່ມີຄວາມສຳຄັນຫຼາຍສຳລັບຊາວຝຣັ່ງ ເພາະວ່າຊາວຝຣັ່ງໄດ້ກິນເນີຍແຂງ ແລະ ພວກເຂົາໄດ້ຜະລິດເນີຍແຂງເອງ.

**1) ການຊອກຫາຂໍ້ມູນ**

ນັກສຶກສາເຂົ້າຮ່ວມກິດຈະກຳການຊອກຫາຂໍ້ມູນ ເທົ່າກັບ 89% ກິດຈະກຳນີ້ ຊ່ວຍກະຕຸ້ນການເຮັດວຽກເປັນກຸ່ມຂອງນັກສຶກສາ, ແລກປ່ຽນຄວາມກັບໝູ່ເພື່ອນ,

ນອກຈາກນັ້ນ ຍັງຊ່ວຍໃຫ້ນັກສຶກສາ ປັບປຸງການນໍາໃຊ້ພາສາຝຣັ່ງໃນຊີວິດປະຈໍາວັນ ແລະ ໄດ້ຮູ້ຈັກວັດທະນະທໍາຝຣັ່ງດີຂຶ້ນ. ເມື່ອເຂົ້າຮ່ວມກິດຈະກໍານີ້ ນັກສຶກສາໄດ້ນໍາໃຊ້ທັກສະດ້ານການວິເຄາະຂໍ້ມູນ ແລະ ມີການຕັດສິນໃຈເລືອກເຟັ້ນເອກະສານທີ່ກ່ຽວຂ້ອງກັບຫົວຂໍ້ ແລະ ຈຸດປະສົງ.

## 4. ວິພາກຜົນ

ຈາກການວິເຄາະຂໍ້ມູນພົບວ່າ ວ່ານັກສຶກສາມີຄວາມສົນໃຈຫຼາຍໃນແຕ່ລະກິດຈະກໍາທີ່ສູນຝຣັ່ງໂກໂຟນ ເຊັ່ນ: ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການອ່ານປຶ້ມພາສາຝຣັ່ງ , ມີຄວາມເພິ່ງພໍໃຈໃນການເບິ່ງຮູບເງົາຝຣັ່ງ, ມີຄວາມເພິ່ງພໍໃຈໃນການສົນທະນາກັບເຈົ້າຂອງພາສາຝຣັ່ງ ເຊິ່ງສອດຄ່ອງກັບງານວິໄຈຂອງ Bérard (1991) ແລະ ຂອງ BLONDIN (2014) ທີ່ວ່າ ການສື່ສານກັບເຈົ້າຂອງພາສາ ແລະ ກິດຈະກໍາ ໂດຍອີງໃສ່ການນໍາໃຊ້ພາສາເປົ້າຫມາຍ ແມ່ນປົກກະຕິແລ້ວເຫັນວ່າ ເປັນວິທີທີ່ດີທີ່ຈະປະຕິບັດທັກສະທີ່ ໄດ້ຮັບຮູ້ເຖິງຜົນປະໂຫຍດຂອງເຂົາເຈົ້າ ແລະ ເສີມສ້າງແຮງຈູງໃຈຂອງນັກສຶກສາ ມີຄວາມເພິ່ງພໍໃຈໃນການຟັງເພງຝຣັ່ງ, ມີຄວາມເພິ່ງພໍໃຈໃນການຮຽນຜ່ານຄອມພິວເຕີ, ມີຄວາມເພິ່ງພໍໃຈໃນການຊອກຫາຂໍ້ມູນ ສອດຄ່ອງກັບບົດຄົ້ນຄ້ວາຂອງເບີຣາບີ ຟາມາ (2015) ບົດບາດຂອງການອ່ານໃນຄວາມເຂົ້າໃຈໃນຫ້ອງຮຽນພາສາຝຣັ່ງເປັນພາສາຕ່າງປະເທດກໍລະນີຂອງນັກຮຽນປະຖົມ ປີທີ 5.

ນອກຈານນີ້ ນັກສຶກສາມີຍັງຄວາມເພິ່ງພໍໃຈຫຼາຍກັບການໃຊ້ສື່ ແລະ ອຸປະກອນ, ໝາຍຄວາມວ່າ ສື່ ແລະ ອຸປະກອນ ທີ່ໃຊ້ໃນການຮຽນ-ການສອນພຽງພໍກັບນັກສຶກສາ ແລະ ເໝາະສົມກັບບົດຮຽນພາສາຝຣັ່ງ, ຮອງລົງມາ ຄືສື່ ແລະ ອຸປະກອນທີ່ໃຊ້ໃນການຮຽນການສອນສັງເກດໄດ້ງ່າຍ, ນັກສຶກສາມີໂອກາດສະແດງທ່າທາງປະກອບການຮຽນການສອນໄດ້ຢ່າງຫຼາກຫຼາຍສອດຄ່ອງກັບບົດຄົ້ນຄ້ວາຂອງ ອາເລັມ ຕັກເອີຊຸດ (2009) ກິດຈະກໍາມ່ວນຊື່ນໃນການຮຽນຮູ້ຄໍາສັບພາສາຝຣັ່ງໃນພາສາຕ່າງປະເທດ.

## 5. ສະຫຼຸບ

ຈາກຜົນການວິເຄາະຂໍ້ມູນກ່ຽວກັບກິດຈະກໍາເພື່ອປັບປຸງການຮຽນພາສາຝຣັ່ງຂອງນັກສຶກສາຄູພາສາຝຣັ່ງ ຄະນະສຶກສາສາດທີ່ສູນພາສາຝຣັ່ງໂກໂຟນ Pôle francophone, ມະຫາວິທະຍາໄລແຫ່ງຊາດ ພົບວ່າ ໂດຍລວມນັກສຶກສາສາມາດພັດທະນາການຮຽນພາສາຝຣັ່ງຈາກກິດຈະກໍາການອ່ານປຶ້ມ, ການເບິ່ງຮູບເງົາ, ການສົນທະນາກັບເຈົ້າຂອງພາສາ, ການຟັງເພງ, ການເຮັດວຽກຜ່ານຄອມພິວເຕີ ແລະ ການຄົ້ນຄວ້າເອກະສານດ້ວຍຕົນເອງ.

ນັກສຶກສາມີຍັງຄວາມເພິ່ງພໍໃຈຫຼາຍ ຕໍ່ກັບກິດຈະກໍາເພື່ອປັບປຸງການຮຽນພາສາຝຣັ່ງຂອງນັກສຶກສາຄູພາສາຝຣັ່ງ ຄະນະສຶກສາສາດທີ່ສູນພາສາຝຣັ່ງໂກໂຟນ Pôle francophone, ມະຫາວິທະຍາໄລແຫ່ງຊາດ

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າຂໍປະຕິຍານວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວແມ່ນບໍ່ມີຂໍ້ຂັດແຍ້ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ພວກຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບທັງໝົດ.

## 7. ຄໍາຂອບໃຈ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍຂອບໃຈ ແລະ ຊໍສະແດງຄວາມຮູ້ບຸນຄຸນມາຍັງຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດທີ່ອະນຸມັດເຮັດໃຫ້ບົດຄົ້ນຄ້ວາເຫຼົ້ມນີ້ ໄດ້ຮັບຜົນສໍາເລັດດ້ວຍດີ, ຂໍຂອບໃຈອົງການ AUF ແລະ ສູນຝຣັ່ງໂກໂຟນ ທີ່ໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກໃນການລົງທົດລອງເຄື່ອງມື ແລະ ລົງເກັບກໍາຂໍ້ມູນ. ຂໍຂອບໃຈມາຍັງທ່ານ ໂອລີເວຍ ເດີໂຣແບກ ເຊິ່ງເປັນຜູ້ຊ່ຽວຊານ ທີ່ໃຫ້ຄວາມຊ່ວຍເຫຼືອໃນການກວດແກ້ ແລະ ປັບປຸງເຄື່ອງມືໃຫ້ສົມບູນ.

## 8. ເອກະສານອ້າງອີງ

ສຶກສາສາດ. (2013). Retrieved 26 septembre 2013, from https://nuol.edu.la/index.php/lo/%E0%BA%84%E0%

BA%B0%E0%BA%99%E0%BA%B0%E0%BA%A7%E0%BA%B4%E0%BA%8A%E0%BA%B2/2020-12-01-04-31-44

ສຶກສາສາດ. (2013). Retrieved 26 septembre 2013, from https://nuol.edu.la/index.php/lo/%E0%BA%84%E0%BA%B0%E0%BA%99%E0%BA%B0%E0%BA%A7%E0%BA%B4%E0%BA%8A%E0%BA%B2/2020-12-01-04-31-44

ໜ້າຫຼັກກະຊວງສຶກສາທິການ ແລະ ກິລາ. (n.d.). Retrieved 26 septembre 2013, from http://www.moes.edu.la/

ໜ້າຫຼັກມະຫາວິທະຍາໄລແຫ່ງຊາດລາວ. (2013). Retrieved 26 septembre 2013, from https://nuol.edu.la/index.php/lo/

*4 compétences linguistiques : Définition et évaluation*. (s. d.). Consulté 6 avril 2012, à l'adresse https://pro.global-exam.com/fr/blog/evaluez-les-competences-linguistiques-de-votre-public

*Accueil | KIDi langues*. (s. d.). Consulté 20 mars 2011, à l'adresse https://kidilangues.com/?gclid=CjwKCAjw-L-ZBhB4EiwA76YzOaFJJZ6DYiBV9xfyIBJQmNImJlQsiCjAlKPRb9dlqM7uVSehTc7iFhoCPFgQAvD_BwE

*Amazon.fr—Dictionnaire Hachette Edition 2009 France—Hachette—Livres*. (s. d.). Consulté 06 septembre 1995, à l'adresse https://www.amazon.fr/Dictionnaire-Hachette/dp/2012813887

Benamar, R. (2014). La langue maternelle, une stratégie pour enseigner/apprendre la langue étrangère. *Multilinguales*, *3*, 139-158.https://doi.org/10.4000/multilinguales.1632

*Cadre européen commun de référence pour les langues : Apprendre, enseigner, évaluer (CECR)*. (s. d.). Consulté 26 décembre 2001, à l'adresse. https://www.coe.int/fr/web/common-european-framework-reference-languages

*Définitions : Autoapprentissage—Dictionnaire de français Larousse*. (s. d.). Consulté 20 mars 2001, à l'adresse https://www.larousse.fr/dictionnaires/francais/autoapprentissage/6594

*Dictionnaire de la langue française—Le Robert*. (s. d.). Consulté 06 octobre 2006, à l'adresse https://www.lerobert.com/dictionnaires/francais/langue

*Dictionnaire hachette encyclopédique illustré 1995 | LISEO – France Éducation international*. (s. d.). Consulté 14 septembre 1995, à l'adresse https://liseo.france-education-international.fr/index.php?lvl=notice_display&id=10562

*France Alumni—Enseignement du français dans le monde*. (s. d.). Consulté 27 janvier 2011, à l'adresse https://www.francealumni.fr/fr/magazine/langue-francaise/enseigne ment-du-francais-dans-le-monde-25661

Halté, J.-F., &Rispail, M. (2005). *L'oral dans la classe : Compétences, enseignement, activités*. L'Harmattan.

La page est introuvable. (s. d.). *CIEL Bretagne*. Consulté 2 novembre 2010, à l'adresse https://www.ciel.fr/apprendre-francais/exercices-francais.htm

*Le système universitaire du Laos : Le français à l'université*. (s. d.). Consulté 20 mars 2013, à l'adresse https://wikimemoires.net/2013/03/le-systeme-universitaire-laotien-et-le-francais-a-luniversite/

*Portail de l'Organisation Internationale de la Francophonie (OIF)*. (s. d.). Organisation Internationale de la Francophonie. Consulté 15 mars 2010, à l'adresse https://www.francophonie.org

*Portail des Politiques linguistiques du Conseil de l'Europe*. (s. d.). Politiques linguistiques. Consulté 03 juillet 2013, à l'adresse https://www.coe.int/fr/web/language-policy/home

Sánchez, I. (s. d.). *3. Les METHODES AUDIO-VISUELLES : La méthodologie SGAV ou une approche structuro-globale de la langue*. Consulté 02 avril 2014, à l'adresse https://www.academia.edu/31430414/3_Les_METHODES_AUDIO_VISUELLES_la_m%C3%A9thodologie_SGAV_ou_une_approche_structuro_globale_de_la_langue